ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 217 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 18.12.2015

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍການປະກາດໃຊ້ກົດໝາຍ ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ**

**ແລະ ສະພາປະຊາຊົນຂັ້ນແຂວງ ( ສະບັບປັບປຸງ )**

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ( ສະບັບປັບປຸງ ປີ 2015 ) ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 015/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 031/ຄປຈ, ລົງວັນທີ 15 ທັນວາ 2015.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

**ມາດຕາ 1.** ປະກາດໃຊ້ກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ( ສະບັບປັບປຸງ ).

**ມາດຕາ 2.** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາ...
ປະທານປະເທດ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 015 /ສພຊ

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

( ສະບັບປັບປຸງ )

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ ( ສະບັບປັບປຸງ ປີ 2015 ) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 14 ທັນວາ 2015

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 14 ທັນວາ 2015

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 66 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 14 ທັນວາ 2015

# ກົດໝາຍ
# ວ່າດ້ວຍ ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ
# (ສະບັບປັບປຸງ)

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນການປະຕິບັດສິດປະຊາທິປະໄຕ ໃນການເລືອກຕັ້ງ ຂອງພົນລະເມືອງລາວ ໃຫ້ດຳເນີນໄປຕາມກົດໝາຍ ແລະ ຮັບປະກັນການເລືອກຕັ້ງ ໃຫ້ໄດ້ສະມາຊິກຜູ້ມີມາດຕະຖານຄົບຖ້ວນ, ແນໃສ່ປັບປຸງບູລະນະສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ໜັກແໜ້ນ, ເຂັ້ມແຂງ, ເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າຢ່າງແທ້ຈິງ.

**ມາດຕາ 2 (ປັບປຸງ) ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ**

ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນ ຂະບວນການປະຕິບັດໜ້າທີ່ການເມືອງ ແລະ ສິດປະຊາທິປະໄຕ ຂອງພົນລະເມືອງລາວ ໃນການເລືອກເອົາບຸກຄົນທີ່ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ເຂົ້າໃນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອເປັນຕົວແທນປະຕິບັດສິດອຳນາດ ຂອງປະຊາຊົນລາວບັນດາເຜົ່າ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ພົນລະເມືອງລາວ** ໝາຍເຖິງ ຜູ້ທີ່ມີສັນຊາດລາວ ຊຶ່ງມີສາຍກ່ຽວພັນສະໜິດແໜ້ນທາງດ້ານການເມືອງ ແລະ ກົດໝາຍ ລະຫວ່າງບຸກຄົນ ກັບລັດ ສປປ ລາວ;

2. **ດ້ວຍວິທີອື່ນ** ໝາຍເຖິງ ການຈັດລຽງລຳດັບຂອງຜູ້ສະໝັກຮັບເລືອກຕັ້ງ ຕາມຕຳແໜ່ງ, ຄຸນວຸດທິ ຫຼື ການຈົກສະຫຼາກ;

3. **ຜູ້ຖືກສານຕັດສິນລົງໂທດຕັດອິດສະລະພາບ** ໝາຍເຖິງ ຜູ້ຖືກສານຕັດສິນເປັນຜູ້ກະທຳຜິດ ແລະ ພວມປະຕິບັດໂທດຢູ່;

4. **ບັດທີ່ບໍ່ສາມາດເຊື່ອຖືໄດ້** ໝາຍເຖິງ ບັດທີ່ບໍ່ສາມາດຢັ້ງຢືນໄດ້ຢ່າງຊັດເຈນ ເຊັ່ນ ບັດເປື້ອນ, ບັດສີກຂາດ, ບັດເກີນຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງຢູ່ໜ່ວຍປ່ອນບັດເລືອກຕັ້ງນັ້ນ;

5. **ສະມາຊິກສະພາ** ໝາຍເຖິງ ສະມາຊິກ ສະພາແຫ່ງຊາດ (ສສຊ) ແລະ ສະມາຊິກ ສະພາປະຊາຊົນຂັ້ນແຂວງ (ສສຂ);

6. **ສະພາ** ໝາຍເຖິງ ສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ);

7. **ສະພາປະຊາຊົນຂັ້ນແຂວງ** ໝາຍເຖິງ ສະພາປະຊາຊົນ ແຂວງ, ນະຄອນຫຼວງ;

8. **ແຕ່ລະເຂດເລືອກຕັ້ງ** ໝາຍເຖິງ ເຂດເລືອກຕັ້ງສະພາແຫ່ງຊາດ ແລະ ເຂດເລືອກຕັ້ງ ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານເລືອກຕັ້ງ**

ລັດ ຊຸກຍູ້, ປຸກລະດົມປະຊາຊົນລາວບັນດາເຜົ່າ, ບັນດາຊັ້ນຄົນ ໃຫ້ມີຄວາມຕື່ນຕົວ, ເປັນເຈົ້າການເຂົ້າຮ່ວມ ແລະ ນຳໃຊ້ສິດປະຊາທິປະໄຕຂອງຕົນເຂົ້າໃນວຽກງານເລືອກຕັ້ງ ໃຫ້ໄດ້ຢ່າງເຕັມສ່ວນຕາມລະດັບຄາດໝາຍ.

ລັດ ສະໜອງງົບປະມານ, ພາຫານະ, ວັດຖຸປະກອນທີ່ຈຳເປັນ ແລະ ບຸກຄະລາກອນ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ວຽກງານເລືອກຕັ້ງສະມາຊິກສະພາ ໃຫ້ໄດ້ຕາມລະດັບຄາດໝາຍ ແລະ ມີປະສິດທິຜົນ ທັງຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພ.

**ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບວຽກງານເລືອກຕັ້ງ**

ວຽກງານເລືອກຕັ້ງສະມາຊິກສະພາ ດຳເນີນໄປຕາມຫຼັກການພື້ນຖານ ດັ່ງນີ້:

1. ຫຼັກການທົ່ວໄປ ແມ່ນ ລະບຽບການທີ່ກຳນົດໃຫ້ພົນລະເມືອງລາວ ຜູ້ມີສິດເລືອກຕັ້ງ ດຳເນີນການປ່ອນບັດໃນວັນ, ເວລາດຽວກັນ ລວມທັງວິທີການປ່ອນບັດຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ສະເພາະ;

2. ຫຼັກການສະເໝີພາບ ແມ່ນ ລະບຽບການທີ່ກຳນົດໃຫ້ພົນລະເມືອງລາວ ມີສິດ

ເທົ່າທຽມກັນ ໃນການເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ໂດຍບໍ່ຈໍາແນກເພດ, ເຜົ່າ, ຖານະທາງດ້ານສັງຄົມ, ລະດັບການສຶກສາ ແລະ ຄວາມເຊື່ອຖື;

3. ຫຼັກການໂດຍກົງ ແມ່ນ ລະບຽບການທີ່ກໍານົດໃຫ້ພົນລະເມືອງລາວ ຜູ້ມີສິດເລືອກຕັ້ງ ດໍາເນີນການປ່ອນບັດດ້ວຍຕົນເອງ ເພື່ອເລືອກເອົາຜູ້ສະໝັກຮັບເລືອກຕັ້ງ ທີ່ຕົນເຫັນວ່າມີມາດຕະຖານຄົບຖ້ວນ ເປັນສະມາຊິກສະພາ ຍົກເວັ້ນກໍລະນີທີ່ໄດ້ກໍານົດໄວ້ສະເພາະ;

4. ຫຼັກການລົງຄະແນນສຽງປິດລັບ ແມ່ນ ລະບຽບການທີ່ກໍານົດໃຫ້ພົນລະເມືອງລາວ ຜູ້ມີສິດເລືອກຕັ້ງລົງຄະແນນສຽງ ດ້ວຍການຕັດສິນໃຈຂອງຕົນເອງ ຢູ່ຫ້ອງລັບທີ່ຄະນະກໍາມະການຈັດໄວ້ ຍົກເວັ້ນກໍລະນີທີ່ໄດ້ກໍານົດໄວ້ສະເພາະ;

5. ຫຼັກການຍຸຕິທໍາ ແມ່ນ ລະບຽບການທີ່ກໍານົດໃຫ້ພົນລະເມືອງລາວ ຜູ້ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ໂດຍບໍ່ໃຫ້ມີການລັກໂລບ ປອມແປງ ຄະແນນສຽງ, ສ້າງເງື່ອນໄຂທີ່ເອື້ອອໍານວຍຢ່າງເທົ່າທຽມກັນ ແລະ ຮັບປະກັນຄວາມໂປ່ງໃສ.

### ມາດຕາ 6 (ປັບປຸງ) ຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງ

ພົນລະເມືອງລາວທຸກຄົນ ໂດຍບໍ່ຈໍາແນກ ເພດ, ເຜົ່າ, ຖານະທາງດ້ານເສດຖະກິດ, ສັງຄົມ, ຄວາມເຊື່ອຖື, ສາດສະໜາ, ທີ່ຕັ້ງພູມລໍາເນົາ ລ້ວນແຕ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.

ຜູ້ມີສິດເລືອກຕັ້ງ ຕ້ອງມີອາຍຸແຕ່ ສິບແປດປີ ຂຶ້ນໄປ.

ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາ ຕ້ອງມີອາຍຸແຕ່ ຊາວເອັດປີ ຂຶ້ນໄປ ແລະ ມີມາດຕະຖານຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້.

### ມາດຕາ 7 (ປັບປຸງ) ຜູ້ບໍ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ

ພົນລະເມືອງລາວທີ່ບໍ່ມີສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາ ມີດັ່ງນີ້:

1. ຜູ້ເປັນບ້າ, ເສຍຈິດ;
2. ຜູ້ຖືກສານຕັດສິນ ລົງໂທດຕັດອິດສະລະພາບ, ປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.

### ມາດຕາ 8 (ປັບປຸງ) ສິດຂໍຄັດຄ້ານຜູ້ໄດ້ຮັບການເລືອກຕັ້ງ

ຜູ້ມີສິດເລືອກຕັ້ງ ມີສິດຂໍຄັດຄ້ານຜູ້ໄດ້ຮັບການເລືອກຕັ້ງ ໃນເຂດເລືອກຕັ້ງຂອງຕົນ ກ່ອນວັນເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາ ຖ້າເຫັນວ່າຜູ້ໄດ້ຮັບການເລືອກຕັ້ງນັ້ນ ຫາກມີພຶດຕິກໍາລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການເລືອກຕັ້ງ.

ຜູ້ຂໍຄັດຄ້ານນັ້ນ ຕ້ອງຍື່ນຄຳຄັດຄ້ານ ພ້ອມດ້ວຍຂໍ້ມູນຫຼັກຖານທີ່ເຊື່ອຖືໄດ້ ຕໍ່ຄະນະກຳມະການເລືອກຕັ້ງຂັ້ນກ່ຽວຂ້ອງ ແລະ ຕ້ອງຮັບຜິດຊອບຕໍ່ຄຳຂໍຄັດຄ້ານຂອງຕົນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 9 (ປັບປຸງ) ສິດປົກປ້ອງຂອງຜູ້ໄດ້ຮັບການເລືອກຕັ້ງ**

ຜູ້ໄດ້ຮັບການເລືອກຕັ້ງ ມີ ສິດປົກປ້ອງຕົນເອງ ດ້ວຍການອະທິບາຍ, ຊີ້ແຈງ, ໃຫ້ເຫດຜົນ ກ່ຽວກັບບັນຫາທີ່ຜູ້ຂໍຄັດຄ້ານຕົນນັ້ນ ຕໍ່ຄະນະກຳມະການເລືອກຕັ້ງຂັ້ນກ່ຽວຂ້ອງ.

**ມາດຕາ 10 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍສະບັບນີ້.

ສຳລັບພົນລະເມືອງລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ II
## ການກຳນົດຈຳນວນສະມາຊິກສະພາ ແລະ ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາ

**ມາດຕາ 11 (ປັບປຸງ) ການກຳນົດຈຳນວນສະມາຊິກສະພາ**

ການກຳນົດຈຳນວນສະມາຊິກສະພາ ໃຫ້ປະຕິບັດ ດັ່ງນີ້:

1. ຮັບປະກັນການເຮັດວຽກເປັນໝູ່ຄະນະ;
2. ອີງໃສ່ ທີ່ຕັ້ງ, ຄວາມສຳຄັນ, ຄວາມຈຳເປັນ ແລະ ຈຸດພິເສດທາງດ້ານການເມືອງ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນະທຳ-ສັງຄົມ ຂອງແຕ່ລະແຂວງ, ນະຄອນຫຼວງ ແລະ ເມືອງ, ເທດສະບານ, ນະຄອນ;
3. ພົນລະເມືອງ ຫ້າສິບພັນຄົນໃດ ໃຫ້ມີສະມາຊິກສະພາແຫ່ງຊາດ ໜຶ່ງຄົນ;
4. ແຂວງທີ່ມີພົນລະເມືອງ ສອງຮ້ອຍຫ້າສິບພັນຄົນ ລົງມາ ໃຫ້ມີສະມາຊິກສະພາແຫ່ງຊາດ ຫ້າຄົນ ແລະ ແຂວງທີ່ມີພົນລະເມືອງເກີນກວ່າ ສອງຮ້ອຍຫ້າສິບພັນຄົນ ໃຫ້ເພີ່ມສະມາຊິກສະພາແຫ່ງຊາດ ໜຶ່ງຄົນ ຕໍ່ພົນລະເມືອງ ຫ້າສິບພັນຄົນ ແຕ່ຈຳນວນສະມາຊິກສະພາແຫ່ງຊາດ ໃນເຂດເລືອກຕັ້ງນັ້ນສູງສຸດບໍ່ໃຫ້ເກີນ ສິບເກົ້າຄົນ;
5. ພົນລະເມືອງ ຫ້າສິບພັນຄົນໃດ ກໍໃຫ້ມີສະມາຊິກສະພາປະຊາຊົນຂັ້ນແຂວງ ໜຶ່ງຄົນ; ເມືອງ, ເທດສະບານ, ນະຄອນໃດທີ່ມີພົນລະເມືອງ ຮ້ອຍຫ້າສິບພັນຄົນ ລົງມາ ໃຫ້ມີ

ສະມາຊິກສະພາປະຊາຊົນ ຂັ້ນແຂວງ ສາມຄົນ ແຕ່ຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງທັງໝົດບໍ່ໃຫ້ຫຼຸດ ສິບຫ້າຄົນ ແລະ ເມືອງ, ເທດສະບານ, ນະຄອນໃດທີ່ມີພົນລະເມືອງເກີນກວ່າຮ້ອຍຫ້າສິບພັນຄົນ ໃຫ້ເພີ່ມສະມາຊິກ ສະພາປະຊາຊົນຂັ້ນແຂວງ ໜຶ່ງຄົນ ຕໍ່ພົນລະເມືອງຫ້າສິບພັນຄົນ.

ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາ ໃຫ້ມີຕົວແທນຂອງບັນດາຊັ້ນຄົນ, ເພດ, ໄວ, ເຜົ່າ ທັງຮັບປະກັນຫຼັກການສົມທົບລະຫວ່າງການຄວບຕຳແໜ່ງ ແລະ ບໍ່ຄວບຕຳແໜ່ງໃນອັດຕາສ່ວນຢ່າງເໝາະສົມ.

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດຈຳນວນ ຜູ້ສະໝັກຮັບເລືອກຕັ້ງ ແລະ ຈຳນວນສະມາຊິກສະພາແຫ່ງຊາດ ໃນແຕ່ລະເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍແມ່ນປະທານປະເທດເປັນຜູ້ອອກລັດຖະດຳລັດປະກາດເປັນທາງການ ກ່ອນວັນເລືອກຕັ້ງພາຍໃນ ສີ່ສິບຫ້າວັນ.

**ມາດຕາ 12 (ປັບປຸງ) ມາດຕະຖານຂອງຜູ້ສະໝັກຮັບເລືອກຕັ້ງ**

ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາ ຕ້ອງມີມາດຕະຖານຄົບຖ້ວນ ດັ່ງນີ້:

1. ເປັນພົນລະເມືອງລາວ;
2. ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຈົງຮັກພັກດີ ແລະ ຕັ້ງຕໍ່ບໍລິສຸດ ຕໍ່ປະເທດຊາດ, ຖືເອົາຜົນປະໂຫຍດຂອງປະຊາຊົນເປັນກົກ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ, ມີຄວາມອົດທົນ, ປະຢັດ, ຊື່ສັດ, ທ່ຽງທຳ, ບໍ່ອວດອົ່ງທະນົງຕົວ, ບໍ່ສວຍໃຊ້ອຳນາດ ເດັດດ່ຽວຕ້ານການສໍ້ລາດບັງຫຼວງ, ຕ້ານພະຍາດອາດຍາສິດ ແລະ ເປັນແບບຢ່າງທີ່ດີ ໃນການປະຕິບັດກົດໝາຍ;
3. ກຳແໜ້ນ ແລະ ຍຶດໝັ້ນແນວທາງປ່ຽນແປງໃໝ່, ລັດຖະທຳມະນູນ ແລະ ກົດໝາຍ; ຮູ້ໂຄສະນາ ແລະ ສຶກສາອົບຮົມປະຊາຊົນ, ເດັດດ່ຽວສູ້ຊົນເພື່ອບັນລຸເປົ້າໝາຍ ປະເທດຊາດ ມັ່ງຄັ່ງເຂັ້ມແຂງ, ປະຊາຊົນ ຮັ່ງມີ ຜາສຸກ, ສັງຄົມ ມີຄວາມສາມັກຄີ ປອງດອງ ປະຊາທິປະໄຕ ຍຸຕິທຳ ແລະ ສີວິໄລ;
4. ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ, ຄົ້ນຄວ້າ ມີຄຳເຫັນຕໍ່ບັນຫາສຳຄັນພື້ນຖານຂອງປະເທດຊາດ, ຂອງທ້ອງຖິ່ນ ແລະ ສາມາດປະຕິບັດໜ້າທີ່ຂອງຕົນໄດ້;
5. ມີລະດັບການສຶກສາຈົບຂັ້ນມັດທະຍົມຕອນຕົ້ນຂຶ້ນໄປ, ມີວິຊາສະເພາະໃດໜຶ່ງ;
6. ມີສຸຂະພາບດີ.

**ມາດຕາ 13 (ປັບປຸງ) ການສະເໜີລາຍຊື່ ແລະ ການຈັດລຽງເລກລຳດັບຂອງຜູ້ສະໝັກຮັບເລືອກຕັ້ງ**

ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ມີສິດຄົ້ນຄວ້າ, ທາບທາມ ແລະ ສະເໜີລາຍຊື່ຜູ້ຕາງໜ້າອົງການຂອງຕົນອອກສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ.

ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຈາກຂະແໜງການ ແລະ ອົງການຈັດຕັ້ງຂັ້ນສູນກາງນັ້ນ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ຈາກທ້ອງຖິ່ນ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລ້ວນຳສະເໜີໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ສະເໜີຕໍ່ ຄະນະກຳມະການເລືອກຕັ້ງຂັ້ນເມືອງ ແລະ ນຳສະເໜີໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລ້ວນຳສະເໜີໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

ສຳລັບລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາປະຊາຊົນຂັ້ນແຂວງ ຈາກຂະແໜງການ ແລະ ອົງການຈັດຕັ້ງຂັ້ນແຂວງ ໃຫ້ສະເໜີຕໍ່ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລ້ວນຳສະເໜີໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ພິຈາລະນາຕົກລົງ.

ການຈັດລຽງເລກລຳດັບລາຍຊື່ຂອງຜູ້ສະໝັກຮັບເລືອກຕັ້ງ ໃນແຕ່ລະເຂດເລືອກຕັ້ງຈະດຳເນີນຕາມຕົວອັກສອນລາວ ຫຼື ດ້ວຍວິທີອື່ນກໍໄດ້ ຕາມການຕົກລົງຂອງຄະນະກຳມະການເລືອກຕັ້ງລະດັບຊາດ.

**ມາດຕາ 14 (ປັບປຸງ) ການປະກອບເອກະສານຂອງຜູ້ສະໝັກຮັບເລືອກຕັ້ງ**

ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາ ຕ້ອງປະກອບເອກະສານຕ່າງໆ ດັ່ງນີ້:

1. ໃບຄຳຮ້ອງຂໍສະໝັກຮັບເລືອກຕັ້ງ;
2. ຊີວະປະຫວັດ;
3. ຮູບຂະໜາດ 6x9 ຊັງຕີແມັດ;
4. ໃບຢັ້ງຢືນທີ່ຢູ່;
5. ໃບແຈ້ງໂທດເລກທີ 3;
6. ໃບຢັ້ງຢືນສຸຂະພາບ.

**ມາດຕາ 15 (ປັບປຸງ) ການປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງ**

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ສັງລວມບັນຊີລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາ ໃນທົ່ວປະເທດ ແລ້ວປະກາດເປັນທາງການພາຍໃນ ສີ່ສິບຫ້າວັນ ກ່ອນວັນເລືອກຕັ້ງ.

**ມາດຕາ 16 ການຄັດຄ້ານຜູ້ສະໝັກຮັບເລືອກຕັ້ງ**

ຜູ້ມີສິດປ່ອນບັດເລືອກຕັ້ງ ມີສິດຄັດຄ້ານ ຜູ້ສະໝັກຮັບເລືອກຕັ້ງ ໃນເຂດເລືອກຕັ້ງຂອງຕົນ ທີ່ຕົນເຫັນວ່າບໍ່ມີມາດຕະຖານຄົບຖ້ວນ ຫຼື ມີການກະທຳ ຊຶ່ງເປັນການລະເມີດກົດໝາຍ, ລະບຽບການ ແລະ ແຕະຕ້ອງເຖິງສິດຜົນປະໂຫຍດຂອງປະຊາຊົນ ໂດຍມີຂໍ້ມູນຫຼັກຖານທີ່ເຊື່ອຖືໄດ້ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດ ເຈັດວັນ ນັບແຕ່ວັນປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນຕົ້ນໄປ.

ການຄັດຄ້ານນັ້ນ ໃຫ້ເຮັດເປັນລາຍລັກອັກສອນ ແລ້ວຍື່ນຕໍ່ຄະນະກຳມະການເລືອກຕັ້ງຂັ້ນເມືອງ ເພື່ອລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນແຂວງ ພິຈາລະນາແກ້ໄຂພາຍໃນກຳນົດສາມວັນ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ນັ້ນ ຕ້ອງຮີບຮ້ອນສົ່ງໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ພິຈາລະນາແກ້ໄຂ ພາຍໃນກຳນົດ ຫ້າວັນ ນັບແຕ່ວັນໄດ້ຮັບຄຳຄັດຄ້ານເປັນຕົ້ນໄປ.

ຜູ້ຄັດຄ້ານ ຕ້ອງຮັບຜິດຊອບຕໍ່ຄຳຄັດຄ້ານຂອງຕົນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 17 (ປັບປຸງ) ການຈັດຕັ້ງໂຄສະນາຫາສຽງ**

ອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ມີ ສິດ ແລະ ໜ້າທີ່ ອຳນວຍຄວາມສະດວກໃນການຈັດສະຖານທີ່, ຈັດຕັ້ງການໂຄສະນາຫາສຽງ ໃຫ້ຜູ້ສະໝັກຮັບເລືອກຕັ້ງໃນເຂດເລືອກຕັ້ງຂອງຕົນ ຕາມກົດໝາຍ ແລະ ລະບຽບການ.

ຜູ້ສະໝັກຮັບເລືອກຕັ້ງແຕ່ລະຄົນ ມີ ສິດໂຄສະນາຫາສຽງໃຫ້ແກ່ຕົນເອງ ຕາມລະບຽບການແລະ ບໍ່ໃຫ້ໂຄສະນາທັບຖົມ ຫຼື ໃສ່ຮ້າຍປ້າຍສີຜູ້ສະໝັກຮັບເລືອກຕັ້ງຄົນອື່ນ.

ການໂຄສະນາຫາສຽງ ໃຫ້ເລີ່ມພາຍຫຼັງວັນປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ຕາມການຕົກລົງຂອງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຕ້ອງຢຸດລົງກ່ອນວັນເລືອກຕັ້ງ ໜຶ່ງວັນ.

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ກຳນົດລະບຽບການຈັດຕັ້ງໂຄສະນາຫາສຽງ.

## ໝວດທີ III
## ການກຳນົດເຂດເລືອກຕັ້ງ ແລະ ໜ່ວຍປ່ອນບັດເລືອກຕັ້ງ

**ມາດຕາ 18 (ປັບປຸງ) ການກຳນົດເຂດເລືອກຕັ້ງ**

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ໃຫ້ຖືເອົາ ແຂວງ, ນະຄອນຫຼວງ ເປັນເຂດເລືອກຕັ້ງ.

ການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ຖືເອົາ ເມືອງ, ເທດສະບານ, ນະຄອນ ເປັນເຂດເລືອກຕັ້ງ.

ເພື່ອໃຫ້ແທດເໝາະກັບສະພາບການຕົວຈິງ ຮັບປະກັນການປະຕິບັດໜ້າທີ່ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນລາວບັນດາເຜົ່າ ຢ່າງເປັນປົກກະຕິ ພາຍຫຼັງທີ່ການເລືອກຕັ້ງສຳເລັດແລ້ວ:

1. ຖ້າຫາກມີການຍຸບ ໂຮມເຂົ້າ ຫຼື ສ້າງຕັ້ງແຂວງຂຶ້ນໃໝ່ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງກ່ຽວກັບການສັບຊ້ອນສະມາຊິກສະພາແຫ່ງຊາດ.

2. ຖ້າຫາກມີການຍຸບ ໂຮມເຂົ້າ ຫຼື ສ້າງເມືອງຂຶ້ນໃໝ່ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ຕົກລົງ ກ່ຽວກັບການສັບຊ້ອນ ສະມາຊິກສະພາປະຊາຊົນຂັ້ນແຂວງ.

**ມາດຕາ 19 ການກຳນົດໜ່ວຍປ່ອນບັດເລືອກຕັ້ງ**

ການກຳນົດໜ່ວຍປ່ອນບັດເລືອກຕັ້ງສະມາຊິກສະພາ ໃຫ້ຖືເອົາບ້ານເປັນຫຼັກ, ບ້ານໃດທີ່ມີຜູ້ມີສິດເລືອກຕັ້ງແຕ່ ຫ້າຮ້ອຍ ເຖິງ ໜຶ່ງພັນຄົນ ໃຫ້ຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ, ຖ້າຫາກຫຼາຍກວ່າ ໜຶ່ງພັນຄົນ ຂຶ້ນໄປ ໃຫ້ຈັດຕັ້ງເປັນຫຼາຍໜ່ວຍປ່ອນບັດເລືອກຕັ້ງ.

ສຳລັບບ້ານທີ່ຢູ່ໃກ້ຄຽງກັນ ຊຶ່ງມີຈຳນວນຜູ້ມີສິດເລືອກຕັ້ງໜ້ອຍກວ່າ ຫ້າຮ້ອຍຄົນ ນັ້ນ ໃຫ້ໂຮມເຂົ້າກັນ ແລ້ວຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ.

ໃນກໍລະນີບ້ານທີ່ຢູ່ຫ່າງໄກສອກຫຼີກ, ການໄປມາມີຄວາມຫຍຸ້ງຍາກຫຼາຍນັ້ນ ອາດຈະຈັດຕັ້ງເປັນໜ່ວຍປ່ອນບັດເລືອກຕັ້ງໜຶ່ງ ຫຼື ຈັດຕັ້ງເປັນໜ່ວຍຮັບຜິດຊອບຫີບບັດເຄື່ອນທີ່ ເພື່ອໄປຮັບເອົາບັດລົງຄະແນນສຽງຂອງຜູ້ມີສິດເລືອກຕັ້ງກໍໄດ້.

ໜ່ວຍປ່ອນບັດເລືອກຕັ້ງ ສຳລັບພົນລະເມືອງລາວທີ່ພວມປະຕິບັດໜ້າທີ່ ແລະ ດຳລົງຊີວິດຢູ່ຕ່າງປະເທດນັ້ນ ໃຫ້ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ກຳນົດ.

**ມາດຕາ 20 ການກຳນົດໜ່ວຍປ່ອນບັດເລືອກຕັ້ງຢູ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ຄະນະກອງບັນຊາການ ກອງພົນ, ກອງພັນ, ກອງຮ້ອຍເອກະລາດ ແລະ ຄະນະກອງບັນຊາການ ແຂວງ, ນະຄອນຫຼວງ ເປັນຜູ້ກຳນົດໜ່ວຍປ່ອນບັດເລືອກຕັ້ງຢູ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງຕົນ ແລ້ວແຈ້ງເປັນລາຍລັກອັກສອນໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງທີ່ຄະນະກອງນັ້ນຕັ້ງຢູ່ ເພື່ອຮັບຮູ້ ແລະ ສັງລວມເຂົ້າບັນຊີລາຍຊື່ ໃນຈຳນວນໜ່ວຍປ່ອນບັດເລືອກຕັ້ງຂອງເມືອງ, ເທດສະບານ, ນະຄອນນັ້ນ.

ສຳລັບກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຖ້າຫາກມີຄວາມຈຳເປັນຈັດຕັ້ງໜ່ວຍປ່ອນບັດເລືອກຕັ້ງສະເພາະນັ້ນ ກໍໃຫ້ຫ້ອງວ່າການກະຊວງດັ່ງກ່າວ ເປັນຜູ້ກຳນົດ ແລ້ວແຈ້ງເປັນລາຍລັກອັກສອນ ໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງບ່ອນກະຊວງນັ້ນຕັ້ງຢູ່ ເພື່ອຮັບຮູ້.

# ໝວດທີ IV
# ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ

**ມາດຕາ 21 (ປັບປຸງ) ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ**

ອົງການປົກຄອງບ້ານ ເປັນຜູ້ຮັບຜິດຊອບຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ ສະມາຊິກສະພາ ໃນຂອບເຂດບ້ານຂອງຕົນ.

ຜູ້ມີສິດເລືອກຕັ້ງແຕ່ລະຄົນ ມີສິດຈົດຊື່ຂອງຕົນ ຢູ່ໜ່ວຍປ່ອນບັດເລືອກຕັ້ງໜ່ວຍດຽວ ບ່ອນຕົນອາໄສຢູ່ ຫຼື ຂຶ້ນສຳມະໂນຄົວເທົ່ານັ້ນ.

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ປະກາດລາຍຊື່ຜູ້ມີສິດປ່ອນບັດເລືອກຕັ້ງ ດັ່ງກ່າວ ໃນຂອບເຂດທົ່ວປະເທດ ກ່ອນວັນເລືອກຕັ້ງພາຍໃນ ສາມສິບວັນ.

ບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ ຕ້ອງນຳມາຕິດປະກາດເປັນທາງການ ຢູ່ພາຍໃນໜ່ວຍປ່ອນບັດເລືອກຕັ້ງຂອງບ້ານ ເປັນຕົ້ນ ຫ້ອງການປົກຄອງບ້ານ, ສະຖານທີ່ສາທາລະນະຂອງເຂດປ່ອນບັດ ເພື່ອໃຫ້ປະຊາຊົນຕິດຕາມ ແລະ ກວດກາຊື່ຂອງຕົນ.

**ມາດຕາ 22 (ປັບປຸງ) ການຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງຢູ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ຄະນະກອງບັນຊາການ ກອງພົນ, ກອງພັນ, ກອງຮ້ອຍເອກະລາດ ແລະ ຄະນະກອງບັນຊາການ ແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບຂຶ້ນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ແລ້ວແຈ້ງເປັນລາຍລັກອັກສອນໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງບ່ອນຄະນະກອງດັ່ງກ່າວນັ້ນຕັ້ງຢູ່ ເພື່ອຮັບຮູ້.

ສຳລັບ ທະຫານ, ຕຳຫຼວດ ທີ່ມີປື້ມສຳມະໂນຄົວ ອາໄສຢູ່ບ້ານໃດ ກໍໃຫ້ຈົດຊື່ຂອງຕົນເຂົ້າໃນບັນຊີລາຍຊື່ ຜູ້ມີສິດເລືອກຕັ້ງ ຢູ່ໜ່ວຍປ່ອນບັດເລືອກຕັ້ງຂອງບ້ານນັ້ນ.

**ມາດຕາ 23 ການຂໍປ່ຽນໜ່ວຍປ່ອນບັດເລືອກຕັ້ງຢູ່ບ່ອນໃໝ່**

ພາຍຫຼັງໄດ້ປະກາດບັນຊີລາຍຊື່ຜູ້ມີສິດເລືອກຕັ້ງແລ້ວ ຖ້າຜູ້ໃດຜູ້ໜຶ່ງ ຫາກຖືກຍົກຍ້າຍ ຫຼື ໄປເຮັດວຽກງານຢູ່ບ່ອນອື່ນນັ້ນ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ ຫຼື ຄະນະກອງ ສຳລັບກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ບ່ອນຕົນໄດ້ຂຶ້ນບັນຊີ ເພື່ອຂໍເອົາໃບຢັ້ງຢືນໄປລົງຄະແນນສຽງຢູ່ໜ່ວຍປ່ອນບັດເລືອກຕັ້ງບ່ອນໃໝ່.

# ໝວດທີ V
# ຄະນະກຳມະການເລືອກຕັ້ງ

**ມາດຕາ 24 (ປັບປຸງ) ອົງປະກອບຄະນະກຳມະການເລືອກຕັ້ງ**

ຄະນະກຳມະການເລືອກຕັ້ງ ປະກອບດ້ວຍ ຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ.

1. ຄະນະກຳມະການເລືອກຕັ້ງລະດັບຊາດ ແມ່ນ ການຈັດຕັ້ງທີ່ຄະນະປະຈຳສະພາແຫ່ງຊາດ ຕົກລົງສ້າງຕັ້ງ ແລ້ວສະເໜີປະທານປະເທດ ອອກລັດຖະດຳລັດປະກາດ ເປັນທາງການ, ມີພາລະບົດບາດ ຊີ້ນຳ, ນຳພາ ການເລືອກຕັ້ງສະມາຊິກສະພາ ແລະ ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ;

2. ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ປະກອບດ້ວຍ:
- ຄະນະກຳມະການເລືອກຕັ້ງຂັ້ນແຂວງ;
- ຄະນະກຳມະການເລືອກຕັ້ງຂັ້ນເມືອງ;
- ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ.

ການປະກອບຄະນະກຳມະການເລືອກຕັ້ງແຕ່ລະຂັ້ນ ໃຫ້ມີຕົວແທນຈາກອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ສຳລັບຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະກຳມະການເລືອກຕັ້ງຂັ້ນແຂວງນັ້ນ ຍັງໃຫ້ມີຕົວແທນຈາກສະພາ ຕື່ມອີກ.

ຄະນະກຳມະການເລືອກຕັ້ງແຕ່ລະຂັ້ນ ມີສິດສ້າງຕັ້ງອະນຸກຳມະການ ເພື່ອເປັນກົງຈັກຊ່ວຍວຽກຂອງຕົນ ຕາມຄວາມເໝາະສົມ.

**ມາດຕາ 25 ການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ ແລ້ວສະເໜີປະທານປະເທດ ອອກລັດຖະດຳລັດປະກາດເປັນທາງການພາຍໃນ ເກົ້າສິບວັນ ກ່ອນວັນເລືອກຕັ້ງ.

ຄະນະກຳມະການເລືອກຕັ້ງລະດັບຊາດ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ, ແຕ່ຈຳນວນຄະນະກຳມະການບໍ່ໃຫ້ເກີນ ສິບເຈັດຄົນ.

**ມາດຕາ 26 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະກຳມະການເລືອກຕັ້ງລະດັບຊາດ**

ຄະນະກຳມະການເລືອກຕັ້ງລະດັບຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ກຳນົດທິດທາງ, ແຜນການເຄື່ອນໄຫວ, ອອກມະຕິ, ຄຳແນະນຳ, ຄຳສັ່ງ ກ່ຽວກັບວຽກງານເລືອກຕັ້ງໃນທົ່ວປະເທດ;

2. ແນະນຳໃຫ້ອົງການປົກຄອງທ້ອງຖິ່ນ ແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນຂອງຕົນ ແລະ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ໃນຂອບເຂດທ້ອງຖິ່ນຕົນ;

3. ຈັດຕັ້ງການສຶກສາອົບຮົມທາງດ້ານການເມືອງ-ແນວຄິດ, ກົດໝາຍ ແລະ ລະບຽບການ ເພື່ອຮັບປະກັນການຍົກລະດັບການນຳໃຊ້ສິດປະຊາທິປະໄຕ ຂອງປະຊາຊົນລາວບັນດາເຜົ່າ ແລະ ຮັບປະກັນຄວາມເປັນເອກະພາບ, ຄວາມສະຫງົບ ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ກ່ຽວກັບວຽກງານເລືອກຕັ້ງໃຫ້ໄດ້ຮັບຜົນດີ;

4. ຊຸກຍູ້ ແລະ ປຸກລະດົມຂະບວນການດ້ານຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານເລືອກຕັ້ງສະມາຊິກສະພາ;

5. ກະກຽມ, ແບ່ງປັນງົບປະມານ, ແຈກຢາຍ ບັນດາເອກະສານ ແລະ ອຸປະກອນຮັບໃຊ້ການເລືອກຕັ້ງ;

6. ຄົ້ນຄວ້າພິຈາລະນາ ຄຳຮ້ອງຂໍສະໝັກຮັບເລືອກຕັ້ງ ເພື່ອອະນຸມັດ ແລະ ປະກາດລາຍຊື່ຜູ້ສະໝັກຮັບເລືອກຕັ້ງຢ່າງເປັນທາງການ;

7. ຄົ້ນຄວ້າພິຈາລະນາ ແລະ ແກ້ໄຂຄຳຮ້ອງຂໍຕໍ່ວ່າຂອງຜູ້ມີສິດເລືອກຕັ້ງ ແລະ ຜູ້ມີສິດສະໝັກຮັບເລືອກຕັ້ງ ກ່ຽວກັບວຽກງານຂອງຄະນະກຳມະການເລືອກຕັ້ງແຕ່ລະຂັ້ນ;

8. ຊີ້ນຳ, ນຳພາ ແລະ ຕິດຕາມກວດກາການເຄື່ອນໄຫວວຽກງານ ຂອງຄະນະກຳມະການ ເລືອກຕັ້ງລະດັບທ້ອງຖິ່ນ;

9. ສັງລວມ ແລະ ປະກາດຜົນຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດ ໃນທົ່ວປະເທດ;

10. ອອກບັດຢັ້ງຢືນຊົ່ວຄາວ ໃຫ້ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ;

11. ສະຫຼຸບ, ຕີລາຄາ ແລະ ຖອດຖອນບົດຮຽນ ກ່ຽວກັບການເລືອກຕັ້ງ, ຍ້ອງຍໍສັນລະເສີນ ການຈັດຕັ້ງ ແລະ ບຸກຄົນທີ່ມີຜົນງານດີເດັ່ນ ໃນບັ້ນເລືອກຕັ້ງໃນທົ່ວປະເທດ;

12. ສະເໜີເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ;

13. ລາຍງານຜົນສຳເລັດຂອງການເລືອກຕັ້ງ ແລະ ຄຸນລັກສະນະຂອງຜູ້ໄດ້ຮັບເລືອກຕັ້ງຕໍ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດໃໝ່;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ກ່ຽວກັບວຽກງານເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 (ປັບປຸງ) ການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ**

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນຂອງຕົນ ແລ້ວປະກາດເປັນທາງການພາຍໃນ ຫົກສິບວັນກ່ອນວັນເລືອກຕັ້ງ.

ຄະນະກຳມະການເລືອກຕັ້ງຂັ້ນແຂວງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ, ແຕ່ຈຳນວນຄະນະກຳມະການດັ່ງກ່າວ ບໍ່ໃຫ້ເກີນ ສິບຫ້າຄົນ.

ຄະນະກຳມະການເລືອກຕັ້ງຂັ້ນເມືອງ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ, ແຕ່ຈຳນວນຄະນະກຳມະການດັ່ງກ່າວ ບໍ່ໃຫ້ເກີນ ສິບສາມຄົນ.

**ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ**

ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍທິດທາງ, ແຜນການເຄື່ອນໄຫວ, ມະຕິ, ຄຳແນະນຳ, ຄຳສັ່ງ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ;
2. ຈັດຕັ້ງການສຶກສາອົບຮົມທາງດ້ານການເມືອງ-ແນວຄິດ, ກົດໝາຍ ແລະ ລະບຽບການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນການຍົກລະດັບການນຳໃຊ້ສິດປະຊາທິປະໄຕ ຂອງປະຊາຊົນລາວບັນດາເຜົ່າ ແລະ ຮັບປະກັນຄວາມເປັນເອກະພາບ ກ່ຽວກັບວຽກງານເລືອກຕັ້ງໃນຂັ້ນຂອງຕົນ;
3. ຊຸກຍູ້ ແລະ ປຸກລະດົມຂະບວນການດ້ານຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານເລືອກຕັ້ງໃນຂັ້ນຂອງຕົນ;
4. ຄຸ້ມຄອງ, ນຳໃຊ້ງົບປະມານ, ແຈກຢາຍບັນດາເອກະສານ ແລະ ອຸປະກອນຮັບໃຊ້ການເລືອກຕັ້ງໃນເຂດຂອງຕົນ;
5. ຊີ້ນຳ, ນຳພາ ແລະ ຕິດຕາມກວດກາການເຄື່ອນໄຫວວຽກງານຂອງຄະນະກຳມະການເລືອກຕັ້ງຂັ້ນລຸ່ມຖັດຕົນ;
6. ປະສານສົມທົບກັບກຳລັງປະກອບອາວຸດໃນຂັ້ນຂອງຕົນ ເພື່ອຮັບປະກັນຄວາມສະຫງົບ ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນການເລືອກຕັ້ງສະມາຊິກສະພາ;
7. ນຳພາການຈັດຕັ້ງໂຄສະນາຫາສຽງ ແລະ ແນະນຳຊີວະປະຫວັດຂອງຜູ້ສະໝັກຮັບເລືອກຕັ້ງໃຫ້ປະຊາຊົນຊາບ;
8. ພິຈາລະນາ ແກ້ໄຂຄຳຮ້ອງຂໍ່ຕໍ່ວ່າຂອງຜູ້ມີສິດເລືອກຕັ້ງ ແລະ ຜູ້ມີສິດສະໝັກຮັບເລືອກຕັ້ງ ກ່ຽວກັບການປະຕິບັດວຽກງານເລືອກຕັ້ງໃນຂັ້ນຂອງຕົນ;
9. ສັງລວມ ແລະ ຢັ້ງຢືນຜົນຂອງການເລືອກຕັ້ງ ໃນຂອບເຂດທ້ອງຖິ່ນຕົນ ແລ້ວໃຫ້ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້;
10. ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ ແລະ ລາຍງານ ກ່ຽວກັບການເລືອກຕັ້ງໃຫ້ຂັ້ນເທິງຖັດຕົນ, ຈັດຕັ້ງການຍ້ອງຍໍ ສັນລະເສີນ ການຈັດຕັ້ງ ແລະ ບຸກຄົນທີ່ມີຜົນງານດີເດັ່ນໃນການປະຕິບັດວຽກງານເລືອກຕັ້ງໃນຂັ້ນຂອງຕົນ;
11. ສະເໜີເປີດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນຂັ້ນແຂວງ;

12. ລາຍງານຜົນສຳເລັດຂອງການເລືອກຕັ້ງ ແລະ ຄຸນລັກສະນະຂອງຜູ້ໄດ້ຮັບເລືອກຕັ້ງ ຕໍ່ກອງປະຊຸມຄັ້ງປະຖົມມະລືກ ຂອງສະພາປະຊາຊົນຂັ້ນແຂວງ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ກ່ຽວກັບວຽກງານເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ການແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ**

ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ໃນຂອບເຂດເມືອງຂອງຕົນ.

ຄະນະກອງບັນຊາການ ກອງພົນ, ກອງພັນ, ກອງຮ້ອຍເອກະລາດ ແລະ ຄະນະກອງບັນຊາການ ແຂວງ, ນະຄອນຫຼວງ, ຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງຢູ່ໃນກຳລັງປະກອບອາວຸດ ແລ້ວແຈ້ງເປັນລາຍລັກອັກສອນ ໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງບ່ອນຄະນະກອງ ແລະ ຫ້ອງວ່າການນັ້ນຕັ້ງຢູ່ ເພື່ອຮັບຮູ້.

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ, ກຳມະການ ແລະ ເລຂານຸການ ສາມ ຫາ ຫ້າຄົນ ແຕ່ຈຳນວນຄະນະຮັບຜິດຊອບ ບໍ່ໃຫ້ເກີນສິບຫ້າຄົນ.

**ມາດຕາ 30 (ປັບປຸງ) ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ**

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້, ແນະນຳ, ສຶກສາອົບຮົມກົດໝາຍ, ລະບຽບການກ່ຽວກັບວຽກງານເລືອກຕັ້ງ ແລະ ຈັດຕັ້ງນຳພາຜູ້ມີສິດເລືອກຕັ້ງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໄປໃຊ້ສິດປ່ອນບັດເລືອກຕັ້ງຢ່າງຄົບຖ້ວນ, ຖືກຕ້ອງ ແລະ ທັນເວລາ;

2. ກະກຽມສະຖານທີ່, ຫີບບັດລົງຄະແນນສຽງ ສະມາຊິກສະພາແຫ່ງຊາດ ແລະ ຫີບບັດລົງຄະແນນສຽງສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ອຸປະກອນຮັບໃຊ້ການປ່ອນບັດເລືອກຕັ້ງ;

3. ຄຸ້ມຄອງ, ແນະນຳ ແຈກຢາຍ ບັດລົງຄະແນນສຽງເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ບັດລົງຄະແນນສຽງເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ແກ່ຜູ້ມີສິດເລືອກຕັ້ງຢ່າງຊັດເຈນ;

4. ຮັບຜິດຊອບວຽກງານປ່ອນບັດເລືອກຕັ້ງ, ປະສານສົມທົບກັບກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນຄວາມສະຫງົບ, ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ໜ່ວຍປ່ອນບັດເລືອກຕັ້ງຂອງຕົນ;

5. ແກ້ໄຂຄຳສະເໜີ ຫຼື ຄຳຮ້ອງຂໍຕໍ່ວ່າຂອງຜູ້ມີສິດເລືອກຕັ້ງ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ແຍກທີບບັດ, ນັບບັດ, ກວດກາບັດ ໃນແຕ່ລະຫີບ ແລະ ເຮັດບົດບັນທຶກຜົນຂອງການປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ບົດບັນທຶກຜົນຂອງການປ່ອນບັດເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ຢູ່ໜ່ວຍຂອງຕົນ ແລ້ວມອບບົດບັນທຶກ, ຕາປະທັບ ແລະ ເອກະສານອື່ນທີ່ສຳຄັນ ໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ;

7. ເກັບມ້ຽນບັດລົງຄະແນນສຽງທີ່ໄດ້ປ່ອນແລ້ວນັ້ນ ໄວ້ຈົນກວ່າອາຍຸການຂອງຄະນະກຳມະການເລືອກຕັ້ງໄດ້ສິ້ນສຸດລົງ ແລ້ວຈຶ່ງທຳລາຍຖິ້ມ;

8. ສະຫຼຸບ, ຕີລາຄາ, ຖອດຖອນບົດຮຽນ, ແລ້ວລາຍງານກ່ຽວກັບວຽກງານເລືອກຕັ້ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ;

9. ຄັດເລືອກຕົວເດັ່ນ ແລ້ວສະເໜີໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງພິຈາລະນາ ແລະ ສະເໜີຂັ້ນເທິງຕົກລົງຍ້ອງຍໍ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ກ່ຽວກັບວຽກງານເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 (ປັບປຸງ) ອາຍຸການຂອງຄະນະກຳມະການເລືອກຕັ້ງ**

ອາຍຸການ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ຈະສິ້ນສຸດລົງ ພາຍຫຼັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດນັ້ນ.

ອາຍຸການຂອງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ຈະສິ້ນສຸດລົງ ພາຍຫຼັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ ຊຸດນັ້ນ.

## ໝວດທີ VI
## ການກຳນົດວັນ ເວລາ ແລະ ລະບຽບການປ່ອນບັດເລືອກຕັ້ງ

**ມາດຕາ 32 (ປັບປຸງ) ການກຳນົດວັນເລືອກຕັ້ງ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດວັນເລືອກຕັ້ງ ແລ້ວສະເໜີປະທານປະເທດອອກລັດຖະດຳລັດປະກາດ ຢ່າງເປັນທາງການ ກ່ອນວັນເລືອກຕັ້ງພາຍໃນ ເກົ້າສິບວັນ.

ການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດຳເນີນໃນວັນດຽວກັນຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍຖືເອົາວັນເສົາ ຫຼື ວັນອາທິດເປັນວັນເລືອກຕັ້ງ.

ໃນກໍລະນີທີ່ມີຄວາມຈຳເປັນ ຄະນະປະຈຳສະພາແຫ່ງຊາດ ອາດຈະກຳນົດວັນເລືອກຕັ້ງສະເພາະກ່ອນ ຫຼື ຫຼັງ ວັນເລືອກຕັ້ງທີ່ໄດ້ກຳນົດໄວ້ນັ້ນກໍໄດ້.

**ມາດຕາ 33 ການກຳນົດເວລາປ່ອນບັດເລືອກຕັ້ງ**

ເວລາປ່ອນບັດເລືອກຕັ້ງ ໃຫ້ເລີ່ມແຕ່ ເຈັດໂມງເຊົ້າ ຫາ ສິບເຈັດໂມງແລງ.

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ອາດຈະຕົກລົງໄຂພິທີ ຫຼື ອັດພິທີໄວ ຫຼື ຊ້າກວ່າ ເວລາທີ່ໄດ້ກຳນົດໄວ້ນັ້ນກໍໄດ້ ໂດຍອີງໃສ່ສະພາບການຕົວຈິງຂອງແຕ່ລະບ່ອນ ແຕ່ບໍ່ໃຫ້ໄຂພິທີກ່ອນ ຫ້າໂມງເຊົ້າ ແລະ ອັດພິທີ ຊ້າກວ່າ ສິບເກົ້າໂມງແລງ.

**ມາດຕາ 34 (ປັບປຸງ) ລະບຽບການປ່ອນບັດເລືອກຕັ້ງ**

ລະບຽບການປ່ອນບັດເລືອກຕັ້ງ ມີ ດັ່ງນີ້:

1. ສະຖານທີ່ປ່ອນບັດເລືອກຕັ້ງ ໃຫ້ຈັດໃສ່ບ່ອນທີ່ເຫັນວ່າເໝາະສົມ ແລະ ສະດວກດີ ເຊັ່ນ ໂຮງຮຽນ, ສະໂມສອນ, ວັດ ຫຼື ສະຖານທີ່ອື່ນ;

2. ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງແນະນຳ, ເຜີຍແຜ່ລະບຽບການຕ່າງໆ, ວິທີຂີດບັດ ແລະ ວິທີປ່ອນບັດ ລົງຄະແນນສຽງ ໃຫ້ຜູ້ມີສິດເລືອກຕັ້ງທຸກຄົນເຂົ້າໃຈ;

3. ກ່ອນການປ່ອນບັດນັ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງໄຂຫີບບັດ ໃຫ້ເຫັນທາງໃນ ໂດຍຊ້ອງໜ້າປະຊາຊົນ;

4. ຜູ້ມີສິດເລືອກຕັ້ງ ຕ້ອງສະເໜີຕົວ ແລະ ແຈ້ງບັດຢັ້ງຢືນຕໍ່ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ເພື່ອຮັບເອົາບັດລົງຄະແນນສຽງ ທັງສອງຫີບ;

5. ສຳລັບຜູ້ມີສິດເລືອກຕັ້ງ ທີ່ບໍ່ຮູ້ໜັງສື ຊຶ່ງບໍ່ສາມາດຂີດບັດດ້ວຍຕົນເອງໄດ້ນັ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ມີສິດແຕ່ງຕັ້ງຜູ້ຮັບຜິດຊອບຊ່ວຍຂີດບັດ, ແຕ່ຕ້ອງປະຕິບັດ ຕາມຄວາມມັກ ແລະ ການຊີ້ບອກຂອງຜູ້ນັ້ນ ແລະ ໃຫ້ຜູ້ກ່ຽວນຳເອົາບັດລົງຄະແນນສຽງໄປປ່ອນໃສ່ແຕ່ລະຫີບບັດດ້ວຍຕົນເອງ. ໃນກໍລະນີທີ່ປ່ອນບັດດ້ວຍຕົນເອງບໍ່ໄດ້ ກໍມອບໃຫ້ຄະນະຮັບຜິດຊອບ ໜ່ວຍປ່ອນບັດເລືອກຕັ້ງຜູ້ໃດໜຶ່ງຊ່ວຍນຳເອົາບັດໄປປ່ອນໃສ່ແຕ່ລະຫີບບັດ ໂດຍຊ້ອງໜ້າຜູ້ກ່ຽວ;

6. ໃນກໍລະນີ ທີ່ຜູ້ມີສິດເລືອກຕັ້ງ ເຈັບປ່ວຍ, ເສຍອົງຄະ, ເຖົ້າແກ່ໄປປ່ອນບັດບໍ່ໄດ້ນັ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງຈັດຕັ້ງໜ່ວຍຮັບຜິດຊອບຫີບບັດເຄື່ອນທີ່ໄປຮັບເອົາບັດລົງຄະແນນສຽງກັບທີ່;

7. ຖ້າຜູ້ມີສິດເລືອກຕັ້ງຫາກຂີດບັດຜິດ ຕ້ອງສົ່ງບັດທີ່ຂີດຜິດນັ້ນຄືນ ແລ້ວຂໍເອົາບັດໃໝ່ນຳຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ;

8. ຜູ້ມີສິດເລືອກຕັ້ງ ຕ້ອງປ່ອນບັດລົງຄະແນນສຽງໃສ່ແຕ່ລະຫີບບັດ ເທື່ອລະຄົນ.

**ມາດຕາ 35 ການແກ້ໄຂກໍລະນີສຸກເສີນຢູ່ບ່ອນປ່ອນບັດເລືອກຕັ້ງ**

ໃນເວລາດຳເນີນການປ່ອນບັດເລືອກຕັ້ງນັ້ນ ຖ້າຫາກມີກໍລະນີສຸກເສີນຢ່າງຮ້າຍແຮງເກີດຂຶ້ນ ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງປະກາດໂຈະການປ່ອນບັດໃນທັນທີ, ແຕ່ຕ້ອງ

ພິຈາລະນາແກ້ໄຂກໍລະນີດັ່ງກ່າວໃຫ້ສຳເລັດ ເພື່ອສາມາດສືບຕໍ່ການປ່ອນບັດນັ້ນໄດ້. ຖ້າຫາກບໍ່ສາມາດແກ້ໄຂໄດ້ນັ້ນ ກໍໃຫ້ປະກາດງົດການປ່ອນບັດເລືອກຕັ້ງ ແລ້ວລາຍງານໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ພິຈາລະນາໃນທັນທີ ເພື່ອແກ້ໄຂ ຫຼື ກຳນົດວັນເວລາປ່ອນບັດເລືອກຕັ້ງໃໝ່.

## ໝວດທີ VII
## ການນັບຄະແນນສຽງ ແລະ ການປະກາດຜົນການເລືອກຕັ້ງ

### ມາດຕາ 36 (ປັບປຸງ) ການນັບຄະແນນສຽງ

ການນັບຄະແນນສຽງ ຕ້ອງດຳເນີນຢ່າງເປີດເຜີຍ ໂດຍຊ້ອງໜ້າພະຍານຢ່າງໜ້ອຍສາມຄົນ ທີ່ມາຈາກຜູ້ມີສິດເລືອກຕັ້ງຂອງໜ່ວຍປ່ອນບັດເລືອກຕັ້ງນັ້ນ, ແຕ່ຫາກບໍ່ແມ່ນຜູ້ສະໝັກຮັບເລືອກຕັ້ງ.

ນັກຂ່າວ ແລະ ຜູ້ຕາງໜ້າຂອງຜູ້ສະໝັກຮັບເລືອກຕັ້ງ ຈະເຂົ້າຮ່ວມສັງເກດການ ແລະ ຕິດຕາມການນັບຄະແນນສຽງກໍໄດ້.

ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ ຕ້ອງແບ່ງເປັນສອງຈຸ ຄື ຈຸຮັບຜິດຊອບຫີບປ່ອນບັດເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ຈຸຮັບຜິດຊອບຫີບປ່ອນບັດເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ; ໃນການນັບຄະແນນສຽງນັ້ນ ໃຫ້ຜູ້ໜຶ່ງອ່ານ, ຜູ້ໜຶ່ງກວດກາຄືນ, ຜູ້ໜຶ່ງຂຽນ ແລະ ຜູ້ອື່ນໆ ເປັນຜູ້ຕິດຕາມ ແລະ ບັນທຶກ.

### ມາດຕາ 37 (ປັບປຸງ) ບັດລົງຄະແນນສຽງທີ່ບໍ່ຖືກຕ້ອງ

ບັດລົງຄະແນນສຽງ ທີ່ບໍ່ຖືກຕ້ອງ ມີ ດັ່ງນີ້:

1. ບໍ່ມີຕາປະທັບຂອງໜ່ວຍປ່ອນບັດເລືອກຕັ້ງນັ້ນ;
2. ຂີດຊື່ຜູ້ສະໝັກຮັບເລືອກຕັ້ງເກີນ ຫຼື ຫຼຸດຈຳນວນທີ່ໄດ້ກຳນົດໄວ້;
3. ບໍ່ຂີດຊື່ຜູ້ສະໝັກຮັບເລືອກຕັ້ງ;
4. ບໍ່ປ່ອນບັດຖືກຕາມຫີບບັດທີ່ກ່ຽວຂ້ອງ;
5. ບໍ່ສາມາດເຊື່ອຖືໄດ້.

### ມາດຕາ 38 (ປັບປຸງ) ບົດບັນທຶກຜົນການປ່ອນບັດເລືອກຕັ້ງ

ບົດບັນທຶກຜົນການປ່ອນບັດເລືອກຕັ້ງ ໃຫ້ເຮັດເປັນສອງບົດ ຄື ບົດບັນທຶກຜົນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ບົດບັນທຶກຜົນການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ຊຶ່ງມີເນື້ອໃນ ດັ່ງນີ້:

1. ເວລາໄຂ ແລະ ອັດພິທີ ປ່ອນບັດເລືອກຕັ້ງ;
2. ລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນ ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

3. ຈຳນວນຜູ້ມີສິດເລືອກຕັ້ງທັງໝົດ;

4. ຈຳນວນຜູ້ມາປ່ອນບັດເລືອກຕັ້ງຕົວຈິງ;

5. ຈຳນວນບັດລົງຄະແນນສຽງ ທີ່ໄດ້ຮັບຕົວຈິງ;

6. ຈຳນວນບັດລົງຄະແນນສຽງທີ່ຂີດຜິດ ໃນແຕ່ລະຫີບບັດ ຊຶ່ງໄດ້ນຳມາປ່ຽນເອົາບັດໃໝ່;

7. ຈຳນວນບັດລົງຄະແນນສຽງ ທີ່ຖືກຕ້ອງໃນແຕ່ລະຫີບບັດ;

8. ຈຳນວນບັດລົງຄະແນນສຽງ ທີ່ບໍ່ຖືກຕ້ອງໃນແຕ່ລະຫີບບັດ;

9. ຈຳນວນຄະແນນສຽງ ທີ່ຜູ້ສະໝັກຮັບເລືອກຕັ້ງແຕ່ລະຄົນໄດ້ຮັບ;

10. ຈຳນວນຄຳຮ້ອງຂໍຕໍ່ວ່າ ທີ່ຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງໄດ້ແກ້ໄຂແລ້ວ ແລະ ຄຳຮ້ອງຂໍຕໍ່ວ່າທີ່ບໍ່ທັນໄດ້ແກ້ໄຂ ພ້ອມດ້ວຍເຫດຜົນ ( ຖ້າຫາກມີ ).

ບົດບັນທຶກດັ່ງກ່າວ ຕ້ອງມີລາຍເຊັນຂອງຫົວໜ້າຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ, ເລຂານຸການ ແລະ ພະຍານສາມຄົນ ທີ່ເຂົ້າຮ່ວມໃນການກວດກາບັດ.ບົດບັນທຶກນັ້ນສະບັບໜຶ່ງສົ່ງໃຫ້ຄະນະກຳມະການເລືອກຕັ້ງຂັ້ນເມືອງ ເພື່ອລາຍງານຕໍ່ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ອີກສະບັບໜຶ່ງມອບໃຫ້ນາຍບ້ານເກັບຮັກສາໄວ້ ເພື່ອເປັນຫຼັກຖານ.

## ມາດຕາ 39 (ປັບປຸງ) ຜູ້ໄດ້ຮັບການເລືອກຕັ້ງ

ຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາ ແມ່ນ ຜູ້ໄດ້ຮັບຄະແນນສຽງຫຼາຍກວ່າຕາມລຳດັບ ຈົນຄົບຕາມຈຳນວນທີ່ຕ້ອງການເລືອກເອົາໃນແຕ່ລະເຂດເລືອກຕັ້ງ.

ໃນກໍລະນີທີ່ຄະແນນສຽງ ຂອງຜູ້ຢູ່ໃນອັນດັບສຸດທ້າຍຂອງຈຳນວນທີ່ຕ້ອງການ ໃນເຂດເລືອກຕັ້ງໃດໜຶ່ງຫາກເທົ່າກັນນັ້ນ ໃຫ້ຕັດສິນເອົາຜູ້ມີອາຍຸການຫຼາຍກວ່າ, ແຕ່ໃນກໍລະນີທີ່ອາຍຸການຫາກເທົ່າກັນ ແມ່ນໃຫ້ເອົາຜູ້ມີອາຍຸກະສຽນສູງກວ່າ ເປັນຜູ້ໄດ້ຮັບການເລືອກຕັ້ງ.

ໃນກໍລະນີທີ່ຄະແນນສຽງຂອງຜູ້ຢູ່ໃນອັນດັບສຸດທ້າຍຂອງຈຳນວນທີ່ຕ້ອງການ ໃນເຂດເລືອກຕັ້ງໃດໜຶ່ງຫາກເທົ່າກັນລະຫວ່າງເພດຍິງກັບເພດຊາຍ ໃຫ້ຕັດສິນເອົາເພດຍິງ.

ຜູ້ໄດ້ຮັບການເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ທີ່ເປັນຜູ້ດຳລົງຊີວິດຢູ່ທ້ອງຖິ່ນເຂດເລືອກຕັ້ງນັ້ນ ເປັນທັງສະມາຊິກສະພາປະຊາຊົນຂັ້ນແຂວງ.

## ມາດຕາ 40 ການປະກາດຜົນຂອງການເລືອກຕັ້ງ

ພາຍຫຼັງ ຄະນະກຳມະການເລືອກຕັ້ງ ໄດ້ສຳເລັດການນັບຄະແນນສຽງ ເປັນທີ່ຮຽບຮ້ອຍ ແລະ ຖືກຕ້ອງແລ້ວ ໃຫ້ປະຕິບັດ ດັ່ງນີ້:

1. ຄະນະກຳມະການເລືອກຕັ້ງຂັ້ນແຂວງ ໃຫ້ສົ່ງຜົນຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດ ໄປຍັງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອສັງລວມ ແລະ ປະກາດຜົນຢ່າງເປັນທາງການ;

2. ຄະນະກຳມະການເລືອກຕັ້ງຂັ້ນເມືອງ ໃຫ້ສົ່ງຜົນຂອງການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ ໄປຍັງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອສັງລວມ ແລະ ປະກາດຜົນຢ່າງເປັນທາງການ.

## ໝວດທີ VIII
## ການເລືອກຕັ້ງແທນ

### ມາດຕາ 41 (ປັບປຸງ) ການເລືອກຕັ້ງແທນ

ການເລືອກຕັ້ງແທນ ຈະໄດ້ຈັດຂຶ້ນເມື່ອສະມາຊິກສະພາ ໃນເຂດເລືອກຕັ້ງໃດໜຶ່ງຫາກຫຼຸດຈຳນວນລົງ ອັນເນື່ອງມາຈາກກໍລະນີ ດັ່ງນີ້:

1. ເສຍຊີວິດ;
2. ລາອອກ;
3. ຖືກປົດອອກຈາກການເປັນສະມາຊິກສະພາ.

ການເລືອກຕັ້ງແທນ ຈະດຳເນີນໄດ້ ກໍຕໍ່ເມື່ອໄດ້ຮັບສຽງເຫັນດີຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາທີ່ກ່ຽວຂ້ອງ ທີ່ເຂົ້າຮ່ວມກອງປະຊຸມ ຕາມການສະເໜີຂອງຄະນະປະຈຳສະພາທີ່ກ່ຽວຂ້ອງ ແລະ ອາຍຸການຂອງສະພາທີ່ກ່ຽວຂ້ອງຊຸດນັ້ນ ຫາກຍັງເຫຼືອຢ່າງໜ້ອຍ ສາມປີຂອງອາຍຸການທັງໝົດ ນັບແຕ່ວັນເກີດກໍລະນີ ທີ່ໄດ້ກຳນົດໄວ້ໃນວັກເທິງນີ້.

### ມາດຕາ 42 (ປັບປຸງ) ວິທີການເລືອກຕັ້ງແທນ

ການເລືອກຕັ້ງແທນ ມີ ສອງ ວິທີ ດັ່ງນີ້:

1. ຕາມວິທີທົ່ວໄປ

ຄະນະປະຈຳສະພາທີ່ກ່ຽວຂ້ອງ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ແລະ ກຳນົດວັນເລືອກຕັ້ງແທນ.

ການດຳເນີນການເລືອກຕັ້ງແທນນັ້ນ ໃຫ້ປະຕິບັດຕາມກົດໝາຍສະບັບນີ້.

2. ຕາມວິທີສະເພາະ

ໃນກໍລະນີທີ່ບໍ່ສາມາດດຳເນີນການເລືອກຕັ້ງແທນຕາມວິທີທົ່ວໄປໄດ້ນັ້ນ ໃຫ້ປະຕິບັດ ດັ່ງນີ້:

2.1 ເຂດເລືອກຕັ້ງທີ່ກ່ຽວຂ້ອງ ເລືອກເອົາຜູ້ສະໝັກຮັບເລືອກຕັ້ງ ທີ່ໄດ້ຮັບຄະແນນສຽງຫຼາຍ ຖັດຈາກຜູ້ໄດ້ຮັບເລືອກຕັ້ງເປັນສະມາຊິກສະພາທີ່ກ່ຽວຂ້ອງ ໃນເຂດເລືອກຕັ້ງນັ້ນ;

2.2 ຜູ້ສະໝັກຮັບເລືອກຕັ້ງດັ່ງກ່າວ ຕ້ອງໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນຜູ້ມາປ່ອນບັດເລືອກຕັ້ງ;

2.3 ຜູ້ສະໝັກຮັບເລືອກຕັ້ງດັ່ງກ່າວ ຕ້ອງຮັກສາໄດ້ມາດຕະຖານຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້;

2.4 ເຂດເລືອກຕັ້ງທີ່ກ່ຽວຂ້ອງ ນຳສະເໜີບຸກຄົນດັ່ງກ່າວ ເພື່ອໃຫ້ຄະນະປະຈຳສະພາທີ່ກ່ຽວຂ້ອງ ສະເໜີຕໍ່ກອງປະຊຸມສະພາຂອງຕົນ ພິຈາລະນາຮັບຮອງເອົາເປັນສະມາຊິກສະພາທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ IX
## ຂໍ້ຫ້າມ

### ມາດຕາ 43 (ປັບປຸງ) ຂໍ້ຫ້າມ ສຳລັບ ຜູ້ມີສິດເລືອກຕັ້ງ

ຫ້າມ ຜູ້ມີສິດເລືອກຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ບິດເບືອນ ແນວທາງ ນະໂຍບາຍ ແລະ ຄວາມເປັນຈິງກ່ຽວກັບການເລືອກຕັ້ງ;
2. ໂຄສະນາ ໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ສະໝັກຮັບເລືອກຕັ້ງ;
3. ປັ່ນປ່ວນ, ສ້າງສະຖານະການ ກໍ່ຄວາມບໍ່ສະຫງົບ ໃນໜ່ວຍເລືອກຕັ້ງ;
4. ແຊກແຊງ ການຂີດບັດລົງຄະແນນສຽງ ຂອງຜູ້ອື່ນ ຫຼື ທຳລາຍບັດເລືອກຕັ້ງ;
5. ຂີດບັດລົງຄະແນນສຽງຂອງຕົນ ແບບຊະຊາຍ ຫຼື ບໍ່ຖືກຕ້ອງຕາມລະບຽບການ;
6. ຮັບ ຫຼື ໃຫ້ສິນບົນ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 44 (ປັບປຸງ) ຂໍ້ຫ້າມ ສຳລັບ ຜູ້ສະໝັກຮັບເລືອກຕັ້ງ

ຫ້າມ ຜູ້ສະໝັກຮັບເລືອກຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ໂຄສະນາ ໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ສະໝັກຮັບເລືອກຕັ້ງດ້ວຍກັນ;
2. ໃຫ້ສິນບົນ, ຊື້ຈ້າງ, ຈອບອອຍ ຜູ້ມີສິດເລືອກຕັ້ງ ດ້ວຍຮູບການຕ່າງໆ;
3. ໂຄສະນາຫາສຽງ ໃນວັນເລືອກຕັ້ງ;
4. ເຂົ້າຫຍຸ້ງກ່ຽວການນັບບັດລົງຄະແນນສຽງ ຂອງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 45 (ປັບປຸງ) ຂໍ້ຫ້າມ ສຳລັບ ຄະນະກຳມະການເລືອກຕັ້ງ

ຫ້າມ ຄະນະກຳມະການເລືອກຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ລຳອຽງ, ເຂົ້າຂ້າງອອກຂາ ຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງ ເປັນຕົ້ນ ໃນເວລານັບບັດລົງຄະແນນສຽງ;

2. ໃສ່ຮ້າຍປ້າຍສີ, ທັບຖົມບົດບາດ ແລະ ຊື່ສຽງຂອງຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນເກີນຂອບເຂດ ທີ່ໄດ້ກຳນົດໄວ້;

4. ເມີນເສີຍຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ການຄຸ້ມຄອງງົບປະມານ, ອຸປະກອນຮັບໃຊ້ການເລືອກຕັ້ງ;

5. ຮັບ ຫຼື ໃຫ້ສິນບົນ ຈາກຜູ້ມີສິດເລືອກຕັ້ງ ແລະ ຜູ້ສະໝັກຮັບເລືອກຕັ້ງ;

6. ຂີດບັດແທນຜູ້ມີສິດເລືອກຕັ້ງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງບັດ;

7. ອັດຫີບບັດກ່ອນກຳນົດເວລາ ທີ່ຜູ້ມີສິດເລືອກຕັ້ງ ຍັງບໍ່ທັນໄດ້ມາໃຊ້ສິດປ່ອນບັດເລືອກຕັ້ງຢ່າງຄົບຖ້ວນ ຕາມບັນຊີ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 46 (ປັບປຸງ) ຂໍ້ຫ້າມ ສຳລັບ ບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:

1. ຂັດຂວາງຜູ້ອື່ນບໍ່ໃຫ້ເຂົ້າຮ່ວມການເລືອກຕັ້ງ;

2. ເຂົ້າໄປຫຍຸ້ງກ່ຽວໃນເວລາຜູ້ມີສິດເລືອກຕັ້ງດຳເນີນການຂີດບັດ;

3. ໂຄສະນາຫາສຽງໃຫ້ຜູ້ສະໝັກຮັບເລືອກຕັ້ງໃດໜຶ່ງໃນວັນເລືອກຕັ້ງ ແລະ ເວລາດຳເນີນການປ່ອນບັດ;

4. ກໍ່ຄວາມວຸ້ນວາຍ ໃນການດຳເນີນການເລືອກຕັ້ງ ອັນເປັນການລະເມີດກົດໝາຍ ແລະ ລະບຽບການ;

5. ຍຸແຍ່, ຊວນເຊື່ອ ໃຫ້ຜູ້ສະໝັກຮັບເລືອກຕັ້ງ ໃນເຂດດຽວກັນນັ້ນ ມີຄວາມເຂົ້າໃຈຜິດ ຊຶ່ງກັນ ແລະ ກັນ;

6. ໃຫ້ ຫຼື ຮັບສິນບົນ ຫຼື ການຊື້ຈ້າງຈອບອອຍ ຈາກຜູ້ສະໝັກຮັບເລືອກຕັ້ງດ້ວຍຮູບການຕ່າງໆ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 47 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໃນການເຂົ້າຮ່ວມຂະບວນການ ໂຄສະນາ, ປ້ອງກັນຄວາມສະຫງົບ, ປະກອບສ່ວນທຶນຮອນໃຫ້ແກ່ການເລືອກຕັ້ງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 48 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເລືອກຕັ້ງ ຈະຖືກປະຕິບັດ ມາດຕະການສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ລົງວິໄນ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງ ອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 49 (ປັບປຸງ) ງົບປະມານຮັບໃຊ້ການເລືອກຕັ້ງ**

ງົບປະມານຮັບໃຊ້ການເລືອກຕັ້ງສະມາຊິກສະພາ ແມ່ນ ງົບປະມານຂອງລັດ.

ຄະນະກຳມະການເລືອກຕັ້ງລະດັບຊາດ ເປັນຜູ້ແບ່ງປັນງົບປະມານດັ່ງກ່າວ ໃຫ້ແຕ່ລະເຂດເລືອກຕັ້ງ ຕາມເງື່ອນໄຂຕົວຈິງ ແລະ ຢ່າງເໝາະສົມ.

**ມາດຕາ 50 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ອອກຄຳແນະນຳ ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 51 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ສະບັບເລກທີ 05/ສພຊ ລົງວັນທີ 15 ທັນວາ 2010.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້